Education
Public Schools

SCHOOL SWIMMING AND WATER SAFETY PROGRAM

Message to Parents / Caregivers

## ຂ່າວສານຫາຜູ້ເປັນພໍ່ແມ່ / ຜູ້ໃຫ້ຄວາມດູແລທັງຫຼາຍ

ໂຄງການຂອງ NSW Department of Education ໃຫ້ທາງໂຮງຮຽນສອນລອຍນ້ຳ ນັ້ນແມ່ນໂຄງການເອົາໃຈໃສ່ສອນຮຽນລອຍນ້ຳ, ທີ່ຊ່ວຍສ້າງໃຫ້ມີຄວາມແນ່ໃຈໃນນ້ຳແລະໃຫ້ນັກຮຽນທັງຫຼາຍມີຄວາມສາມາດພື້ນຖານຕ່າງໆເຣື່ອງຄວາມປອດໄພແລະການລອດຊີວິດໃນນ້ຳ. ໂຄງການນີ້ແມ່ນດຳເນີນການໄປລະຍະສິບວັນ. ບົດຮຽນອັນນຶ່ງແຕ່ລະວັນໃຊ້ເວລາ 45 ນາທີ.

ໄດ້ມີການຈັດການຕ່າງໆໃຫ້ເອົາໂຄງການສອນລອຍນ້ຳເຂົ້າໃນຫຼັກສູດຂອງໂຮງຮຽນພວກເຮົາ. ນັກຮຽນທັງຫຼາຍທີ່ຍັງບໍ່ທັນຮອດເຖິງລະດັບມາດຖານອັນສົມຄວນຂອງຄວາມສາມາດເຣື່ອງຄວາມປອດໄພແລະການລອດຊີວິດໃນນ້ຳ, ແລະບໍ່ສາມາດລອຍ 25 ແມັດໄດ້ຢ່າງແນ່ໃຈໃນນ້ຳທີ່ເລິກ ໂດຍບໍ່ມີຜູ້ຊ່ວຍເຫຼືອ, ແມ່ນມີສິດເຂົ້າຮ່ວມໃນໂຄງການສອນລອຍນ້ຳຂອງໂຮງຮຽນ. ໂຄງການນີ້ເອົາໃຈໃສ່ກັບພວກລອຍນ້ຳທີ່ຍັງບໍ່ໄດ້ດີໃນຊັ້ນປີ Years 2 and 3 ແຕ່ກໍຊ່ວຍຮັບເອົາພວກລອຍນ້ຳທີ່ຍັງບໍ່ໄດ້ດີໃນຊັ້ນປີ Years 4 to 6 ພ້ອມທັງນັກຮຽນທີ່ຕ້ອງການຄວາມຊ່ວຍເຫຼືອພິເສດນຳເໝືອນກັນ, ເຊັ່ນພວກທີ່ມາຢູ່ອົສເຕຣເລັຽໃໝ່ແລະນັກຮຽນທີ່ຂາດຄວາມສົມບູນ.

ການສອນຈະມີຂື້ນຢູ່ ____________________________. ໂຄງການນັ້ນຈະສືບຕໍ່**ແຕ່ລະມື້ໄປລະຍະ**
Name of pool

**ສອງອາທິດ**ຕັ້ງແຕ່ ____________________ ຫາ ____________________
Start date Finish date

ການເດີນທາງຈະແມ່ນໂດຍ ____________________ໃນລາຄາ $____________________ ຕໍ່ມື້.
Means of transport Daily transport cost

ຄ່າເຂົ້າສະນ້ຳລາຄາ $____________________ຜ. ຈະບມການຄດຄາສຳລບການສອນ.
Daily pool entry cost

ຄ່າໃຊ້ຈ່າຍທັງໝົດໃນໂຄງການ 10 ມື້ນັ້ນແມ່ນ $____________________.
Total cost

ເດັກແຕ່ລະຄົນຈະຕ້ອງເອົາເຄື່ອງນຸ່ງລອຍນ້ຳຊຸດນຶ່ງ, ຜ້າເຊັດໂຕຜືນນຶ່ງ, ເສື້ອຜູ້ຍິງຫຼືວ່າເສື້ອໂຕນຶ່ງ, ໝວກອັນນຶ່ງແລະເຄື່ອງນຸ່ງທີ່ອຸ່ນຕອນມື້ເຢັນໄປນຳ. ຖ້າບ່ອນສອນມີຂື້ນໃນສະນ້ຳທາງນອກ, ຂໍແນະນຳໃຫ້ນັກຮຽນທັງຫຼາຍໃຊ້ຢາທາກັນແດດໃຫ້ພຽງພໍ, ເຊັ່ນຕົວຢ່າງ ຢາ SPF 30+ ກັນແດດທົ່ວໄປ, ຢາກັນແດດທົນທານນ້ຳໄດ້, ໃຫ້ໝັ່ນທາໃສ່ຕື່ມຕະຫຼອດ. ເສື້ອຢືດຫຼືວ່າເສື້ອນຸ່ງຫຼິ້ນກໍແນະນຳໃຫ້ຖືໄປເໝືອນກັນ (ຖ້າວ່າບ່ອນສະນ້ຳອະນຸຍາດ).

ນັກຮຽນທັງຫຼາຍຈະໄດ້ຖືກທົດສອບໃນລະຍະໂຄງການຮຽນລອຍນ້ຳຂອງໂຮງຮຽນນັ້ນ ເຣື່ອງຄວາມສາມາດໃນຄວາມປອດໄພໃນນ້ຳໝົດທຸກຢ່າງ ໂດຍບໍ່ໃສ່ແວ່ນກັນນ້ຳ.

ຖ້າວ່າລູກຂອງທ່ານມີສິດເຂົ້າຮ່ວມກັບໂຄງການນີ້, ກະລຸນາຂຽນແລະເຊັນໃບໃຫ້ອະນຸຍາດນັ້ນແລະສົ່ງໃບນັ້ນກັບຄືນໃຫ້ຄູສອນຫ້ອງຮຽນຂອງລູກທ່ານ.

**ທ່ານຫົວໜ້າໝວດໂຮງຮຽນ:**____________________________ **ວັນທີ:**____________
Name of principal Date

LAO